ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 0540 /ທຄຕລ 2024
ນະຄອນຫຼວງວຽງຈັນ, ວັນທີ: 07 ກຸມພາ 2024

# ໜັງສືແຈ້ງເຊີນປະມູນ

**ເຖິງ :** ບັນດາບໍລິສັດອອກແບບກໍ່ສ້າງ ແລະ ຕົບແຕ່ງ ອາຄານສຳນັກງານ.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາອອກແບບ ແລະ ຄິດໄລ່ລາຄາກາງອາຄານ ທຄຕລ ສາຂາໂພນໂຮງ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດອອກແບບກໍ່ສ້າງ ແລະ ຕົບແຕ່ງ ກ່ຽວກັບການສະເໜີເງື່ອນໄຂ ແລະ ຂັ້ນຕອນໃນການປະກອບເອກະສານຍື່ນຊອງປະມູນລາຄາອອກແບບ ແລະ ຄິດໄລ່ລາຄາກາງອາຄານສຳນັກງານ ທຄຕລ ສາຂາໂພນໂຮງ ເຊິ່ງສະຖານທີ່ຕອນດິນຕັ້ງຢູ່ບ້ານໂພນໝີ ເມືອງ ວຽງຄຳ ແຂວງວຽງຈັນ ໂດຍມີເນື້ອໃນດັ່ງນີ້:

**I. ເງື່ອນໄຂການປະກອບເອກະສານການປະມູນດັ່ງນີ້:**

1) ໃບສະເໜີລາຄາ 1 ຊຸດ, ການສະເໜີລາຄາໃຫ້ສະເໜີເປັນ %, ທຄຕລ ຈະຄິດໄລ່ຄ່າຈ້າງອອກແບບອີງໃສ່ມູນຄ່າການຮັບຮອງຂອງຜູ້ຮັບເໝົາ ຫຼື ລາຄາກາງທີ່ຄິດໄລ່ ໂດຍຖືເອົາລາຄາທີ່ຕ່ຳສຸດມາຄູນກັບ % ທີ່ສະເໜີມາເປັນມູນຄ່າຈ້າງອອກແບບທີ່ລວມອາກອນມູນຄ່າເພີ່ມ;
2) ໄລຍະເວລາການອອກແບບ;
3) ໜັງສືຄ້ຳປະກັນການປະມູນ: ຜູ້ຮັບເໝົາຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທີ່ສະເໜີລາຄາທັງໝົດດ້ວຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງວັນທີ 11/05/2024) ຫຼື ແຊັກທີ່ວິຊາແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນປະມູນ ທຄຕລ ຈະສົ່ງໜັງສືຄ້ຳປະກັນ ຫຼື ແຊັກດັ່ງກ່າວຄືນ;
4) ໃບທະບຽນວິສາຫະກິດ;
5) ໃບອະນຸຍາດດຳເນີນທຸລະກິດປີ 2023 ຫຼື 2024;
6) ທຶນຈົດທະບຽນວິສາຫະກິດ 1 ຕື້ກີບຂຶ້ນໄປ;
7) ໃບຢັ້ງຢືນການເສຍອາກອນປີ 2022 ຫຼື 2023;
8) ໃບຢັ້ງຢືນຜົນງານ ແລະ ປະສົບການທີມງານທີ່ມີສີມືທາງດ້ານການອອກແບບ ແລະ ຕົບແຕ່ງອາຄານທະນາຄານ ຫຼື ອາຄານສຳນັກງານຫ້ອງການ 3 ຊັ້ນ ຢ່າງໜ້ອຍ 3 ໂຄງການ.
   - ວັນອັງຄານ, ວັນທີ 12/03/2024, ເວລາ 09:00 ໂມງ ແມ່ນມື້ເປີດຊອງປະມູນຊ່ອງໜ້າຄະນະກຳມະການ ທຄຕລ, ບໍລິສັດຕ້ອງຍື່ນຊອງດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມເປີດຊອງປະມູນທີ່ຫ້ອງປະຊຸມຊັ້ນ 05 ຕຶກ C;
   - ລາຄາທີ່ສະເໜີມາຕ້ອງເປັນລາຄາທີ່ສາມາດເປັນຜູ້ອອກແບບເອງ ແລະ ບໍ່ໃຫ້ເປັນການປະມູນໃນນາມນາຍໜ້າ ຫຼື ຂາຍຕໍ່ໃຫ້ບໍລິສັດອື່ນ;
9) ການຄິດໄລ່ລາຄາກາງແມ່ນໃຫ້ແຍກເປັນປະເພດອາຄານ ແລະ ໝວດວຽກຕາມຄວາມເໝາະສົມ, ກຳນົດເປັນສະກຸນເງິນກີບ



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

## II. ການພົວພັນ ແລະ ໄລຍະເວລາການປະຕິບັດວຽກ

1) ສາມາດສອບຖາມລາຍລະອຽດເພີ່ມເຕີມກ່ຽວກັບລາຍລະອຽດການອອກແບບ ຫຼື ລົງສຳຫຼວດສະຖານທີ່ໂຄງການ ຈາກວັນທີ 12/02/2024-09/03/2024, ໃນຊ່ວງເວລາ 08:30-11:30 ໂມງ ແລະ 13:30-16:00 ໂມງ ທີ່ໝາຍເລກໂທລະສັບ 021 213200-414 ນອກຈາກເວລາດັ່ງກ່າວແລ້ວ ທຄຕລ ຈະຂໍສະຫງວນສິດໃນການຕອບຄຳຖາມໃດໆ ທັງໝົດ.
2) ບໍລິສັດສາມາດພົວພັນເອົາຂໍ້ມູນກຳນົດຄວາມຕ້ອງການໂດຍພື້ນຖານດ້ານການອອກແບບ ເລີ່ມແຕ່ວັນທີ 12/02/2024-09/03/2024, ເວລາ 08:30-15:30 ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ຊັ້ນ 04 ຕຶກ C ສຳນັກງານໃຫຍ່.

## III. ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:

1) ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ທຄຕລ ຈະບໍ່ສົ່ງເງິນຄ້ຳປະກັນການປະມູນ 2% ຄືນ.
2) ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ, ຄ່າທຳນຽມຈົດທະບຽນສານ ແລະ ຈົດທະບຽນຊັບສິນຂອງສັນຍາແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງບໍລິສັດອອກແບບທີ່ຊະນະການປະມູນ.
3) ການຊຳລະຄ່າອອກແບບ 100% ພາຍຫຼັງ ທຄຕລ ໄດ້ຜູ້ຮັບເໝົາການກໍ່ສ້າງອາຄານດັ່ງກ່າວ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງບັນດາບໍລິສັດເພື່ອຍື່ນຊອງປະມູນຕາມທີ່ກ່າວມາຂ້າງເທິງນັ້ນດ້ວຍ.

**ປະທານຄະນະກຳມະການ**
**ຈັດຊື້, ກໍ່ສ້າງ-ສ້ອມແປງ-ບໍລິການອື່ນໆ ທຄຕລ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ນ. ສາຍສະໝອນ ຈັນທະຈັກ

ຜູ້ປະສານງານ:

1) ທ່ານ ນາງ ພູແສງທອງ ອານຸລັກຄຳ 020 22221228
2) ທ່ານ ເພັດສະໝອນ ແສງຕະກຸນ 020 77467722